ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1115 ......./ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 13 ມິຖຸນາ 2011.

# ແຈ້ງການ

ເຖິງ: ທ່ານ ຫົວໜ້າພະແນກ ອຸດສາຫະກຳ ແລະການຄ້າແຂວງ,ນະຄອນຫລວງ.
ປະທານ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ.

ເລື່ອງ: ຜັນຂະຫຍາຍການຈັດຕັ້ງປະຕິບັດຄຳສັ່ງແນະນຳຂອງ ນາຍົກລັດຖະມົນຕີ ເລກທີ 010/ນຍ, ລົງວັນທີ 02/06/2011 ກ່ຽວກັບການຕ້ານ ແລະ ສະກັດກັ້ນ ການຂຸດຄົ້ນ ແລະ ຊື້-ຂາຍໄມ້ ປະເພດຫວງຫ້າມ.

- ອີງຕາມຄຳສັ່ງແນະນຳ ເລກທີ 010/ນຍ, ລົງວັນທີ 02/06/2011 ກ່ຽວກັບການຕ້ານ ແລະ ສະກັດກັ້ນການຂຸດຄົ້ນ ແລະ ຊື້-ຂາຍໄມ້ ປະເພດຫວງຫ້າມ.

ເພື່ອເຮັດໃຫ້ຄຳສັ່ງແນະນຳທີ່ກ່າວຂ້າງເທິງ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ ແລະ ເຂັ້ມງວດ ກະຊວງ ອຸດສາຫະກຳ ແລະ ການຄ້າແຈ້ງການມາຍັງພະແນກ ອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫລວງປະຕິບັດດັ່ງນີ້:

1. ໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າເຜີຍແຜ່ຄຳສັ່ງແນະນຳທີ່ກ່າວຂ້າງເທິງໃຫ້ສັງຄົມໄດ້ຮັບຊາບ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ;
2. ເປັນເຈົ້າການຊີ້ນຳ ແລະ ຊຸກຍູ້ການດັດສົມ ແລະ ປັບປຸງໂຮງງານປຸງແຕ່ງໄມ້ໃຫ້ເປັນຜະລິດຕະພັນສຳເລັດຮູບຕາມແຈ້ງການເລກທີ 1046/ອຄ.ກອກ, ລົງວັນທີ 03 ມິຖຸນາ 2011 ເພື່ອຮັບປະກັນຄວາມຍືນຍົງຂອງການຜະລິດໄມ້ໃນອານາຄົດໂດຍສະເພາະແມ່ນໃຫ້ສຸມໃສ່ປຸງແຕ່ງປະເພດໄມ້ຄຸ້ມຄອງ.

    ສ່ວນໄມ້ທີ່ຍຶດ ແລະ ຮິບນັ້ນແມ່ນແນະນຳໃຫ້ໂຮງງານປຸງແຕ່ງ ຫຼື ໂຮງເຟີນີເຈີທີ່ໄດ້ຮັບມອບໝາຍເອົາໃຈໃສ່ປຸງແຕ່ງໃຫ້ມີຄຸນນະພາບ, ສາມາດແຂ່ງຂັນກັບຕະຫລາດຕ່າງປະເທດເພື່ອສ້າງມູນຄ່າເພີ່ມ ແລະ ວຽກເຮັດງານທຳ;
3. ໃຫ້ປະສານສົມທົບກັບພະແນກກະສິກຳ ແລະ ປ່າໄມ້ ເພື່ອທ້ອນໂຮມໄມ້ທີ່ຍຶດ ແລະ ຮິບເປັນຂອງລັດ ແລະ ເກັບມ້ຽນໄວ້ຕາມສະຖານທີ່ເໝາະສົມໃນນີ້ອາດສົມທົບກັບສະມາຄົມປຸງແຕ່ງໄມ້

ຫຼືສະມາຄົມເຟີນີເຈີຂອງແຂວງກ່ຽວກັບສະຖານທີ່ເກັບມ້ຽນ. ພ້ອມດຽວກັນກໍໃຫ້ລາຍງານກ່ຽວກັບຈຳນວນ, ຊະນິດ ແລະ ມູນຄ່າສົ້ນເປືອງຕ່າງໆຢ່າງລົມເຫດລົມຜົນໃນການຍຶດ, ຮິບ ແລະ ທ້ອນໂຮມຕະຫລອດເຖິງການເກັບຮັກສາໄມ້ມາຍັງກະຊວງ ອຸດສາຫະກຳ ແລະ ການຄ້າ;

4. ໃຫ້ສະມາຄົມເຟີນີເຈີລາວ ເປັນເຈົ້າການຊອກຕະຫລາດຕ່າງປະເທດເພື່ອສົ່ງອອກເປັນຜະລິດຕະພັນສຳເລັດຮູບ;
5. ໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າແນະນຳໃຫ້ເຈົ້າໜ້າທີ່ກວດກາການຄ້າເກັບກຳຂໍ້ມູນທີ່ຈັດເຊນໃນການຂຸດຄົ້ນ, ຊື້-ຂາຍ ແລະ ເຄື່ອນຍ້າຍໄມ້ທີ່ຜິດກົດໝາຍຂອງຜູ້ລັກລອບ ຫຼື ກຸ່ມຄົນບໍ່ດີແລ້ວປະສານກັບຂະແໜງການກ່ຽວຂ້ອງເພື່ອດຳເນີນການຕາມລະບຽບ ກົດໝາຍ;
6. ກະຊວງ ອຸດສາຫະກຳ ແລະ ການຄ້າ ໄດ້ແຕ່ງຕັ້ງຄະນະປະສານງານຊີ້ນຳ ແລະ ຕິດຕາມການຈັດຕັ້ງປະຕິບັດຄຳສັ່ງເລກທີ 010/ນຍ, ລົງວັນທີ 02/06/2011ເພື່ອປະສານສົມທົບໃນລາຍລະອຽດກັບພາກສ່ວນທີ່ກ່ຽວຂ້ອງເພື່ອເຮັດໃຫ້ວຽກງານດັ່ງກ່າວຖືກຈັດຕັ້ງປະຕິບັດຢ່າງໄດ້ຮັບຜົນດີ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ,

ຮ/ ລັດຖະມົນຕີວ່າການ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ນູວສະຫວາດ ສະແຫວງສຶກສາ

ບ່ອນສົ່ງ:

- ສຳນັກງານນາຍົກລັດຖະມົນຕີ.
- ກະຊວງ ກະສິກຳ ແລະ ປ່າໄມ້.
- ກະຊວງ ການເງິນ.
- ບັນດາແຂວງ,ນະຄອນຫລວງ.